ເຫລັ້ມ ໔

# ສິນໄຊ

ໂດຍ ປາງຄຳ



ອຸທິນ ບຸນຍາອົງ

ຊຽນເປັນຄຳເວົ້າທຳມະດາ

# ສິນໄຊ

ຈາກຄຳກອນ ຂອງ

**ປາງຄຳ**

ຂຽນເປັນຄຳເວົ້າທຳມະດາ

ໂດຍ ອຸທິນ ບຸນຍາວົງ

ສິນໄຊ ເຫລັ້ມ 2
ຈາກຄຳກອນ ຂອງ ປາງຄຳ

ຂຽນເປັນຄຳເວົ້າທຳມະດາ
ໂດຍ ອຸທິນ ບຸນຍາວົງ

ຮູບປະກອບ ໂດຍ
ວົງສະຫວັນ ດຳລົງສຸກ
ຈັດໜ້າ ແລະອອກແບບປົກ
ບໍລິສັດ ດອກເກດ ຈັດພິມ ຈຳກັດ
ໂທ: 856 21 263748

ພິມຄັ້ງທີ 1 ປີ 1991, (4 ເຫລັ້ມ) ຈັດພິມໂດຍ ອາລະສານ ວັນນະສິນ.
ພິມຄັ້ງທີ 2 ປີ 1994, (4 ເຫລັ້ມ) ຈັດພິມໂດຍ ອາລະສານວັນນະສິນ ອຸປະຖຳ
ໂດຍ ສະມາຄົມສົ່ງປື້ມຮູບໃຫ້ເດັກນ້ອຍລາວແຫ່ງຍີ່ປຸ່ນ (ASPB)
ພິມຄັ້ງທີ 3 ປີ 1996, (2 ເຫລັ້ມ) ຈັດພິມໂດຍ ອົງການອຸຍນິເຊັບ (UNICEF)
ແລະສະມາຄົມສົ່ງປື້ມຮູບໃຫ້ເດັກນ້ອຍລາວແຫ່ງຍີ່ປຸ່ນ (ASPB)
ຄັ້ງທີ 4 ປີ 1998, (1 ເຫລັ້ມ) ຈັດພິມໂດຍ ອຸທິນ ບຸນຍາວົງ
ຄັ້ງທີ 5 ປີ 2004 - 2005, (2 ເຫລັ້ມ) ບໍລິສັດ ດອກເກດ ຈັດພິມ ຈຳກັດ

ສິນໄຊ ເຫລັ້ມ 2
ຈັດພິມ ໂດຍ ບໍລິສັດ ດອກເກດ ຈັດພິມ ຈຳກັດ
ມິຖຸນາ 2005
ທະບຽນອະນຸຍາດພິມ
ອພ35/ພທປ 3108798

ພິມທີ່ ໂຮງພິມ ມັນທາຕຸລາດ, ກະຫນົບແຄມຂອງ
ຈຳນວນ 2000 ຫົວ

ນະຄອນຫລວງວຽງຈັນ, ສ.ປ.ປ.ລາວ.

# ຄຳນຳ ໃນການຈັດພິມ ຄັ້ງທີ 1 (1991)

ຜູ້ອ່ານສ່ວນຫລາຍເວົ້າວ່າ ໄດ້ອ່ານເລື່ອງສິນໄຊ ແຕ່ບໍ່ເຂົ້າໃຈແຈ້ງ ຍ້ອນຄຳກອນມີສັບຍາກຫລາຍ, ດັ່ງນີ້ ຈຶ່ງອ່ານບໍ່ສຸດ ແລ້ວກໍບໍ່ຮູ້ ຄວາມເລິກແລບຂອງເລື່ອງ. ໂດຍທົ່ວໄປ ປະຊາຊົນລາວເຄີຍໄດ້ຍິນໄດ້ ຟັງເລື່ອງສິນໄຊ ຈາກການເລົ່າຂອງຄູອາຈານ ຫລືຜູ້ອາວຸໂສທັງຫລາຍ ໂດຍເລົ່າສືບຕໍ່ກັນມາຫລາຍເຊັ່ນຄົນ.

ປຶ້ມຫົວນີ້ ກໍ່ເປັນຄວາມພະຍາຍາມຂອງວັນນະສິນ ທີ່ຢາກຕອບສະໜອງຄວາມຕ້ອງການຂອງຜູ້ອ່ານ, ໂດຍສະເພາະຜູ້ອ່ານທີ່ເປັນເຍົາວະຊົນ, ພວກເຮົາ ຈຶ່ງເຮັດໂຄງການຄົ້ນຄວ້າ ແລະຮຽບຮຽງເລື່ອງສິນໄຊ ຈາກຄຳກອນມາເປັນຄຳເວົ້າທຳມະດາ ຫລືຄຳຮ້ອຍແກ້ວໂດຍໄດ້ຮັບຄວາມຮ່ວມມືຈາກມູນນິທິໂຕໂຢຕາ ແຫ່ງປະເທດຍີ່ປຸ່ນ. ດ້ວຍຈຸດປະສົງ ໃຫ້ຄົນທົ່ວໄປອ່ານເຂົ້າໃຈງ່າຍ ຜູ້ຮຽບຮຽງຈຶ່ງໃຊ້ຄຳສັບທຳມະດາ, ບໍ່ໃຊ້ລາຊາສັບ ຍົກເວັ້ນບາງຄຳ ທີ່ຈຳເປັນແທ້ໆ. ຊື່ຕົວລະຄອນກໍເອີ້ນຕາມມວນຊົນເວົ້າຕິດປາກເຊັ່ນ ສິນໄຊ, ສັງທອງ, ສີໂຫ (ແທນທີ່ຈະເອີ້ນ ສັງສິນໄຊ, ສັງຂາຣະກຸມານ, ສີຫະຣາດກຸມານ). ການເອີ້ນແບບນີ້ສະດວກ ສະບາຍສຳລັບຜູ້ອ່ານ ແລະຜູ້ຂຽນໃນການຈື່ຈຳ, ດັ່ງດຽວກັນກັບ ທີ່ພວກເຮົາເອີ້ນທາດຫລວງ ຊຶ່ງຕິດປາກ ແລະງ່າຍດາຍກວ່າເອີ້ນ ເຈດີໂລກະຈຸລາມະນີ.

ການນຳເອົາວັນນະຄະດີບູຮານ (Classic) ມາດັດແປງ ໃຫ້ເຫມາະສົມກັບຜູ້ອ່ານ ຕາມຍຸກສະໄຫມນັ້ນ ຫລາຍປະເທດ ໄດ້ເຮັດກັນມາແລ້ວ. ມັນເປັນວິທີໃຫ້ ເຍົາວະຊົນເຂົ້າເຖິງ ວັນນະຄະດີຂອງ

ຊາດຕົນ ແລະປູກຝັງນິໄສມັກອ່ານໃຫ້ແກ່ເດັກ ແລ້ວຕໍ່ໄປກໍອາດເກີດມີແນວຄິດ ຢາກຄົ້ນຄວ້າລົງເລິກ ວັນນະຄະດີດັ່ງກ່າວນັ້ນ ໃນແບບສະບັບເດີມຂອງມັນ.

ໃນການຄົ້ນຄວ້າຮຽບຮຽງນີ້ ພວກເຮົາອາໄສສະບັບທີ່ລິດຈະນາ ໂດຍມະຫາສິລາ ວີຣະວົງສ໌ ເປັນຕົ້ນຕໍ, ນອກນັ້ນກໍໄດ້ອ່ານສະບັບໃບລານ ຫນຶ່ງຜູກ, ສະບັບທີ່ເປັນບົດລຳເລື່ອງ, ສະບັບທີ່ພິມເປັນພາສາໄທ ແລະ ສະບັບທີ່ພິມໂດຍ ສຳນັກພິມຈຳຫນ່າຍ ສ.ປ.ປ.ລາວ.

ການຮຽບຮຽງປຶ້ມ ໃຫ້ອ່ານງ່າຍນັ້ນ ເປັນເລື່ອງຍາກ ໂດຍສະເພາະເລື່ອງສິນໄຊທີ່ເປັນຄຳກອນ, ດັ່ງນີ້ຈຶ່ງບໍ່ອາດປາສະຈາກສິ່ງຂາດຕົກບົກພ່ອງໄດ້, ພວກເຮົາຍິນດີຮັບຄຳຕິຊົມ ແລະຫວັງວ່າຈະໄດ້ຮັບການໃຫ້ອະໄພຈາກທ່ານ ຜູ້ຮອບຮູ້ດ້ວຍ.

ວັນທີ 22 ກໍລະກົດ 1991<br>ດາຣາ ກັນລະຍາ<br>ອຳນວຍການ ວາລະສານ ວັນນະສິນ

## ຄຳນຳ ໃນການຈັດພິມຄັ້ງທີ 2

ນິທານເລື່ອງ ສິນໄຊ ທີ່ຂຽນເປັນຄຳເວົ້າທຳມະດາ ຫລືຄຳຮ້ອຍແກ້ວ ໄດ້ຮັບຄວາມນິຍົມ ຈາກຜູ້ອ່ານເປັນຈຳນວນຫລາຍ ປຶ້ມທີ່ພິມອອກເທື່ອທຳອິດ ໃນປີ 1991 ນັ້ນ ຈຳຫນ່າຍຫມົດໄປໃນເວລາບໍ່ດົນ, ດັ່ງນີ້ ເພື່ອຕອບສະຫນອງຕາມຄວາມຮຽກຮ້ອງຂອງຜູ້ອ່ານ ວັນນະສິນ ຈຶ່ງຈັດພິມສິນໄຊ ເຫລັ້ມ 1, 2, 3 ແລະ 4 ອີກເທື່ອໃຫມ່ ເປັນຄັ້ງທີສອງ.

ພວກເຮົາພູມໃຈ ທີ່ທ່ານຜູ້ອ່ານໃຫ້ຄວາມສົນໃຈຕໍ່ວັນນະຄະດີລາວ ໃນຮູບລັກສະນະໃຫມ່ ຄືການຮຽບຮຽງເປັນຄຳຮ້ອຍແກ້ວທີ່ເຫມາະສົມກັບຍຸກສະໄຫມ. ຄວາມສົນໃຈຂອງທ່ານເປັນກຳລັງໃຈແກ່ພວກເຮົາ ແລະໂອກາດຕໍ່ໄປ ວັນນະສິນ ຈະຜະລິດປຶ້ມ ໃນຮູບລັກສະນະດຽວນີ້ ຈຳນວນຫລາຍຂຶ້ນ ເພື່ອຕອບສະຫນອງ ຄວາມຕ້ອງການຂອງນັກອ່ານ ໂດຍສະເພາະນັກອ່ານທີ່ເປັນເຍົາວະຊົນ.

ຄຽງຄູ່ກັບນີ້, ກອງບັນນາທິການ ຍັງກະກຽມພິມປຶ້ມວັນນະຄະດີໂບຮານຈຳນວນຫນຶ່ງ ໂດຍຮັກສາເນື້ອຫາສາລະ, ເຄົ້າໂຄງເດີມໄວ້ທັງຫມົດ ພຽງແຕ່ປັບປຸງຄຳສັບ ສຳນວນປະໂຫຍກ ໃຫ້ສອດຄ່ອງກັບພາສາປັດຈຸບັນເທົ່ານັ້ນ ທັງນີ້ ກໍເພື່ອເປີດໂອກາດໃຫ້ຜູ້ອ່ານລະດັບປັນຍາຊົນ ໄດ້ສຳຜັດກັບລົດຊາດອັນອ່ອນຊ້ອຍ ອອນຊອນຂອງວັນນະຄະດີເກົ່າແກ່ຂອງລາວເຮົາໄດ້ຢ່າງແທ້ຈິງ.

ຢ່າງໃດກໍດີ, ວັນນະສິນຫວັງວ່າ ຈະໄດ້ຮັບການປະກອບຄຳຄິດເຫັນ ຈາກທ່ານຜູ້ອ່ານ ເພື່ອປັບປຸງການຈັດພິມໃຫ້ດີຂຶ້ນ.

ດ້ວຍຄວາມຮັກແພງ

5 ກໍລະກົດ 1994

ວັນນະສິນ

# ຄຳນຳ ໃນການຈັດພິມ ຄັ້ງທີ 3 (1996)

ເລື່ອງສິນໄຊ ສະບັບເປັນຄຳກອນນັ້ນ ໄດ້ຮັບການພິມເຜີຍແຜ່ອອກຢ່າງກວ້າງຂວາງ ຫລາຍກວ່າວັນນະກັມອື່ນໆ ແລະກືວ່າເປັນເລື່ອງເອກຂອງວັນນະຄະດີບູຮານຂອງລາວເຮົາ. ສຳນວນທີ່ລິດຈະນາຈາກໃບລານ ໂດຍ ມະຫາສິລາ ວິຣະວົງສ໌ ນັ້ນ ກືວ່າເປັນສະບັບ

ທີ່ສົມບູນກວ່າໝູ່ ແລະພິມອອກມາຫລາຍເທື່ອ ນັບແຕ່ຊຸມປີ 1940 ເປັນຕົ້ນມາ.

ສ່ວນເລື່ອງສິນໄຊ ສະບັບເປັນຄຳເວົ້າທຳມະດາ ຊຶ່ງດັດແປງໃຫ້ອ່ານງ່າຍ ເຫມາະສົມກັບຜູ້ອ່ານຮຸ່ນໃຫມ່ນີ້ ເລີ່ມພິມເທື່ອທຳອິດເມື່ອປີ 1991 ອັນນີ້ ເປັນວິທີພາຜູ້ອ່ານເຂົ້າເຖິງວັນນະຄະດີບູຮານອີກຮູບແບບນຶ່ງ ຊຶ່ງຢູ່ຕ່າງປະເທດ ກໍເຄີຍເຮັດມາແລ້ວ. ປາກົດວ່າເລື່ອງສິນໄຊ ສະບັບດັດແປງເປັນຄຳເວົ້າທຳມະດານີ້ ກໍໄດ້ຮັບຄວາມສົນໃຈ ຢ່າງກວ້າງຂວາງ ຈາກຜູ້ອ່ານທັງໄວຫນຸ່ມ ແລະໄວແກ່.

ຄວາມສົນໃຈຂອງຜູ້ອ່ານ ຕໍ່ວັນນະກຳນັ້ນ ຄືກຳລັງດັນໃນທາງບວກ ສຳລັບວັນນະຄະດີ. ຂໍໃຫ້ທຸກຄົນຊ່ອຍເປັນກຳລັງຊຸກຍູ້ວັດທະນະທຳດ້ານນີ້ ໃຫ້ຈະເລີນຍິ່ງໆຂຶ້ນ.

10 ກັນຍາ 1996<br>ອຸທິນ ບຸນຍາວົງ<br>ຜູ້ຮຽບຮຽງ

# ຄຳນຳ ໃນການຈັດພິມ ຄັ້ງນີ້

ການຈັດພິມປຶ້ມແຕ່ລະຫົວ ແຕ່ລະຄັ້ງ ຍ່ອມມີຈຸດພິເສດ ຢູ່ໃນຕົວເຖິງວ່າເລື່ອງ "ສິນໄຊ" ສະບັບຮຽບຮຽງເປັນຄຳເວົ້າ ທຳມະດາໂດຍອຸທິນ ບຸນຍາວົງ ສະບັບນີ້ ໄດ້ຮັບການຈັດພິມມາແລ້ວເຖິງສີ່ເທື່ອ ໃນລະຍະເວລາສິບກວ່າປີ (ແຕ່ປີ1991 ມາ) ແລະຄັ້ງນີ້ ເປັນຄັ້ງທີ 5, ຈຳນວນພິມທັງຫມົດກໍບໍ່ເຖິງຫມື່ນຫົວ, ເມື່ອປຽບໃສ່ ຈຳນວນພົນລະເມືອງຫນຸ່ມ ໃນໄວຮຽນຂັ້ນປະຖົມ ແລະມັດທະຍົມໃນ ທົ່ວປະເທດ

ເຊິ່ງມີຫລາຍແສນຄົນແລ້ວ ກໍນັບວ່າບໍ່ທົ່ວເຖິງກັນເທື່ອ ເຖິງປານນັ້ນ ກໍຕ້ອງໃຊ້ເວລາ ຈຳຫນ່າຍຢູ່ຫລາຍປີ ອັນເປັນສິ່ງຢັ້ງຢືນອີກເທື່ອຫນຶ່ງ ເຖິງວັດທະນະທຳການອ່ານ ອັນອ່ອນນ້ອຍຂອງພວກເຮົາ ທີ່ຫ່າງໄກກັບຂອງປະເທດອ້ອມຂ້າງ ຫລາຍສົມຄວນ ຖ້າຈະກືເອົາເປັນດັດຊະນີວັດແທກການພັດທະນາ ດ້ານວັດທະນະທຳ ຫລື ສຶກສາ ກໍເປັນອັນຈະແຈ້ງວ່າພວກເຮົາ ຢູ່ນຳຫລັງພວກເພິ່ນຫລາຍ. ໂດຍທີ່ວ່າ ເລື່ອງສິນໄຊສຳນວນກອນ ໄດ້ຮັບບັນຈຸເຂົ້າຢູ່ໃນຫລັກສູດພາສາວັນນະຄະດີລາວຂັ້ນມັດທະຍົມ ຂຶ້ນໄປຮອດມະຫາວິທະຍາໄລ ແລະວິທະຍາໄລຄູກໍເອົາເຂົ້າຫລັກສູດຄືກັນ ແຕ່ການອ່ານ ວັນຄະດີເລື່ອງນີ້ບໍ່ວ່າສະບັບຄຳກອນ ຫລື ຮ້ອຍແກ້ວຮຽບຮຽງ ກໍຍັງບໍ່ເປັນທີ່ນິຍົມຟືດຟື້ນແຜ່ກວ້າງພໍເທົ່າໃດ ບໍ່ແຕກຕ່າງຫຍັງ ກັບການອ່ານວັນນະຄະດີເລື່ອງອື່ນໆພໍເທົ່າໃດ ທັງໆທີ່ວ່າ ວັນນະຄະດີເລື່ອງນີ້ ໄດ້ຮັບການ ຍົກຍ້ອງ ໂດຍນັກປາດອາຈານຣຸ່ນກ່ອນໆ ທັງລາວ ແລະຕ່າງປະເທດວ່າເປັນວັນນະຄະຊັ້ນຍອດ ຂອງລາວ ທັງໃນດ້ານສິລະປະ ການປະພັນ ສັນທະກະວີ ພາສາສາດ ສິນລະທັມ ຄຳສອນ ການ ປົກຄອງ... ແຕ່ຄວາມນິຍົມຊົມຊອບໃນການອ່ານຂອງຄົນລາວ ໂດຍທົ່ວໄປ ກໍຍັງຄົງຈຳກັດຮັດແຄບ ຢູ່ແຕ່ໃນແວດວົງ ຜູ້ໄດ້ຮັບ ການສຶກສາສູງໆຈຳນວນຫນຶ່ງເທົ່ານັ້ນ.

ສະມາຊິກ ຂອງ ບໍລິສັດ ດອກເກດ ມີຄວາມຜູກພັນຫມັ້ນຫນຽວຢູ່ກັບວັນນະຄະດີເລື່ອງ ນີ້ ມາດົນນານ ແລະໄດ້ເປັນຜູ້ພະຍາຍາມຊອກຫາທົ່ນຮອນ ມາຈັດພິມອອກ ທັງສອງຮູບແບບ ເພື່ອເຜີຍແຜ່ຄວາມງາມ ຄວາມມ່ວນ ຂອງຍອດວັນນຄະດີ ເລື່ອງນີ້ອອກໃຫ້ເປັນສົມບັດ ທາງວັດທະນະທັມ ແກ່ລູກ ຫລານ ຢ່າງສອດຄ່ອງກັບແນວທາງແລະນະໂຍບາຍຂອງລັດຖະບານ (ວ່າດ້ວຍການສືບທອດແລະປົກປັກ

ຮັກສາ ວັດທະນະທຳຂອງຊາດ) ແລະຄຳຂວັນອັນອຳມະຕະຂອງອະດີດ ທ່ານປະທານ ໄກສອນ ພົມວິຫານ ທີ່ວ່າ ຊາວໜຸ່ມລາວຈົ່ງເປັນດັ່ງນົກອິນຊີ ແລະເປັນສິນໄຊ ແຫ່ງຍຸກສະໄໝ.

ເພື່ອໃຫ້ ເຍົາວະຊົນລາວ ໄວໜຸ່ມ ໄດ້ຮັບຮູ້ ແລະສະອຶບສະອອນນຳພາລະກິດຂອງ ທ້າວສິນໄຊ ໃນວັນນະຄະດີອຳມະຕະເລື່ອງນີ້ ພວກເຮົາຈຶ່ງໄດ້ຈັດພິມສະບັບຄຳຮຽງທຳມະດານີ້ ອອກມາອີກ ແລະຄັ້ງນີ້ ກໍມີຮູບປະກອບສີທີ່ຈັດທຳຂຶ້ນໂດຍສະເພາະເມື່ອຄັ້ງໄດ້ຮັບການຊ່ວຍເຫລືອ ສະໜັບສະໜຸນຈາກ "ສູນພາສາຝຣັ່ງ" ຈັດພິມສິນໄຊ ເປັນພາສາຝຣັ່ງ ໄລຍະປີ 2003 ຫາ 2005.

ຮູບແຕ້ມປະກອບໂດຍສີມືຂອງ ວົງສະຫວັນ ດຳລົງສຸກຜູ້ມີຜົນງານສຳຄັນມາແລ້ວຫລາຍເລື່ອງ ອາດກາຍເປັນແຮງກຳເນີດໜຶ່ງໃຫ້ແກ່ການສ້າງສິລະປະກຳ - ວັນນະຄະດີ ດັ່ງທີ່ບູຮານລາວເພິ່ນໄດ້ເຮັດມາແລ້ວ ເຊັ່ນຮູບແຕ້ມເລື່ອງ ພະລັກພະລາມ ຫລືພະເຈົ້າລຽບໂລກ ຢູ່ຝາຜະໜັງສິມວັດຕ່າງໆ.

ຢ່າງໃດກໍຕາມ ເຖິງວ່າການຈັດພິມຄັ້ງນີ້ ຈະນຳໃຊ້ລະບົບຄອມພິວເຕີ້ ຈັດໜ້າອອກແບບ ຢ່າງທັນສະໄໝ ທັງມີຮູບພາບປະກອບສີສັນງົດງາມ ແຕ່ກໍອາດຍັງມີຂໍ້ຂາດຕົກບົກພ່ອງໄດ້ຢູ່ຈຶ່ງຫວັງເປັນຢ່າງຍິ່ງວ່າ ຈະໄດ້ຮັບຄຳຕິຊົມຈາກທ່ານຜູ້ອ່ານ ແລະການສະໜັບສະໜູນ ທັງນີ້ເພື່ອໃຫ້ການຈັດພິມ ວັນນະຄະດີບູຮານເລື່ອງອື່ນໆຂອງລາວ ຄ່ອຍໆມີຄຸນນະພາບ ກ້າວສູ່ລະດັບສາກົນຍິ່ງໆຂຶ້ນໄປ.

ທີ່ ວຽງຈັນ ພຶດສະພາ 2005

ຜູ້ອຳນວຍການ

ດອກເກດ ຈັດພິມ ຈຳກັດ

# ສິນໄຊ

## ເຫລັ້ມ ໔

*ຕໍ່ຈາກສະບັບກ່ອນ*

*ເມື່ອສິນໄຊຕ້ອງເດີນທາງ ໄປນຳທາອາສຸມຸນທາ ກັບມາ...*



# ຣົບກັບຍັກ ໂຕທໍາອິດ

ເມື່ອຂ້າມຫວິດຜາຊັນແຫ່ງຫນຶ່ງ ສິນໄຊເລີຍໄປພໍ້ຍັກຊຶ່ງໂມໂຫແຮງທີ່ເຂດແດນກໍ່ກຄົນເຂົ້າມາລ່ວງລໍ້າ, ສິນໄຊເຮັດໃຈດີໆໄວ້ ແລະຖາມຍັກວ່າ: " ເຈົ້າເປັນເຊື້ອຊາດໃດ, ຊື່ວ່າຈັ່ງໃດນໍ ?"

ຍັກຕອບວ່າ: " ກູຄືວະລຸນນະຍັກ ຜູ້ເກັ່ງກ້າຊາລືໄປທົ່ວປ່າດົງວົງກົດ. ມະນຸດຫນ້າໃດຕົກມາໃນເຂດນີ້ ແມ່ນຕາຍທັງນັ້ນ ! ບັກນ້ອຍມຶງແມ່ນໃຜ ? ມາແຕ່ໃສຈຶ່ງມາຮອດແຫ່ງນີ້. ກູຈະບໍ່ປ່ອຍໃຫ້ມຶງຫລຸດມືໄປເດັດຂາດ !"

ສິນໄຊເວົ້າກັບຍັກຢ່າງສຸພາບວ່າ: "ເອີ... ຄວາມຕາຍນີ້ແຂວນຄໍທຸກບາດຍ່າງ ມັນເລື່ອງທໍາມະດາ. ຂ້ອຍຊື່ວ່າ ສິນໄຊຜູ້ບໍ່ຄຶດຢ້ານຕາຍ ຈຶ່ງກ້າຂ້າມພູຜາປ່າດົງ ມາຢຽບເກີບກິ່ນນີ້ຄົນດຽວ"

ຍັກໄດ້ຍິນຄໍາເວົ້າ ອັນທ້າທາຍຂອງມະນຸດຕົວນ້ອຍໆ ຈຶ່ງຄຽດແຮງຈົນຮ້ອນກົກຫູວີ່ໆ, ມັນຈັບຄ້ອນຫລູບໄປໃສ່ ແຕ່ສິນໄຊຍົກດາບຂຶ້ນຮັບຈົນອອກແສງມາບໆ, ທ້າວຮ້ອງທັ່ງໃສ່ມັນວ່າ: " ບັກຍັກຊາດຊົ່ວ ! ກູບໍ່ໄດ້ຮາວີຜູ້ໃດ, ເປັນຫຍັງມຶງມາເຮັດດັ່ງນີ້ໃສ່ກູ. ເຊົາເດີ ! ກ້າບໍ່ດັ່ງນັ້ນມັນເປັນຜີຕາຍໂຫງລັກໆ !"

ແຕ່ຍັກກໍບໍ່ຍອມເສຽປຽບ, ມັນໃຈຮ້າຍສຸດຂີດທີ່ມະນຸດຕົວນ້ອຍໆ ເວົ້າດູລ່າຜ່າເປຽ ຈຶ່ງຄວ້າເອົາກ້ອນຫີນແລ່ນໃສ່ ກະວ່າຊິທັບຫົວສິນໄຊ, ແຕ່ສິນໄຊກໍຫລົບຫລີກໄດ້ທັນຢ່າງວ່ອງໄວ ຈົນຍັກເຊກະຫລາໄປ, ພໍໄດ້ຈັງຫວະ ສິນໄຊກໍຍິງລູກສອນໃສ່ຍັກບັດຕາຍ, ມັນດິ້ນ



ບິດໂຕໄປມາດ້ວຍ ຄວາມເຈັບປວດ ທັງພົ່ນໄຟອອກຈາກປາກ ຫວັງໃຫ້ລວບລົບຄູ່ຕໍ່ສູ້ ແຕ່ ສິນໄຊຢູ່ໃນທ່າເຫນືອກວ່າ ຈຶ່ງກອດດາບຟັນຄໍຍັກຂາດກະເດັນໄປ. ອາການໂມໂຫຮ້າຍຂອງວະລຸນນະຍັກ ດັບມອດໄປພ້ອມໆກັບຮ່າງຄີງອັນໃຫຍ່ໂຕ ທີ່ນອນຂວາງປ່າຢູ່ບໍ່ເຫນັງ ບໍ່ຕີງ ສິ່ງກິ່ນຄາວກຸ້ມໄປທົ່ວບໍລິເວນ.

# ຜ່າບແພ້ຊ້າງ

ຜ່ານການສູ້ຮົບຕົບຕີກັບຍັກລາຍທໍາອິດແລ້ວ ສິນໄຊກໍຮີບຮ້ອນເດີນທາງຕໍ່ໄປ ຈົນຮອດແມ່ນ້ຳສາຍຫນຶ່ງທີ່ກວ້າງສອງໂຍດ, ສັງທອງຄອງກ້າຢູ່ແຄມນ້ຳແຫ່ງນີ້ແລ້ວ, ສິນໄຊຂຶ້ນຂີ່ສັງທອງ ແລະພາກັນຂ້າມນ້ຳໄປຢ່າງບໍ່ມີອຸປະສັກໃດໆ, ຂຶ້ນເກີງຝັ່ງແລ້ວ ສັງທອງກໍລ່ວງຫນ້າໄປກ່ອນຕາມເຄີຍ, ສິນໄຊເຂົ້າສູ່ທົ່ງຫລວງໄປໄກເຕີບ ເລີຍໄປເຫັນຮອຍຊ້າງຂະຫນາດໃຫຍ່ກວ້າງເກືອບສາມວາ, ທ້າວນໍາຮອຍຊ້າງໄປບໍ່ໄກປານໃດກໍຈອບຫມູ່ຊ້າງນັບເປັນຫມື່ນເປັນແສນໂຕ. ພວກຊ້າງແຕກຕື່ນແລະພາກັນແລ່ນໄປອ້ອມຊ້າງເຜືອກຊື່ວ່າ ສັດທັນ ຊຶ່ງເປັນພະຍາຊ້າງຄຸມອານາເຂດອັນກວ້າງໄກ. ຊ້າງເຜືອກກາງຫູອອກພຶ້ງວຶ້ງດ້ວຍຄວາມໂມໂຫ ທັງເວົ້າສຽງແຂງເປັນການຂົ່ມຂູ່ວ່າ ຈະຈັບທ້າວນ້ອຍໂມ່ມເຂົ້າປາກ ກິນຕ່າງຫມ້ຽງຄໍາດຽວເລີຍ. ມັນແກວ່ງ

ງວງໄປມາ ເງີ່ງງາຂຶ້ນລົງ ກຽມຕໍ່ສູ້ກັບຜູ້ທີ່ມາລ່ວງລ້ຳເຂດແດນ, ຊ້າງບໍລິວານມີໜ້າທີ່ປົກປ້ອງພະຍາຊ້າງກໍພາກັນຕັ້ງຕົວ ແລ້ວຫລັ່ງມາເປັນຂະບວນ ຈົນມືດທຶບໄປໝົດ ສຽງດັງສະນັ່ນຟ້າສະເທືອນດິນ. ເມື່ອຊ້າງມາຮອດໃກ້ ສິນໄຊຊຶ່ງຢືນຢູ່ຢ່າງບໍ່ຫວັ່ນໄຫວ ກໍເຕາະສາຍທະນູ ເກີດສຽງດັງປານຟ້າຜ່າ, ພວກຊ້າງ ຈຳນວນນັບບໍ່ໄຫວ ພາກັນຕື່ນຕົກໃຈ ແລ້ວບຽດກັນໜີຈົນລົ້ມຊະລົ້ມຊາຍ. ພະຍາຊ້າງເຫັນອາການແຕກສະລຸຜຸພ່າຍ ປານແຜ່ນດິນປີ້ນ ຂອງບໍລິວານ ກໍເລີຍອ່ອນອໍ່ຍອມຕໍ່ສິນໄຊ ເພາະເຫັນວ່າທ້າວບໍ່ແມ່ນມະນຸດທຳມະດາແຕ່ຫາກແມ່ນຜູ້ວິເສດທີ່ມີລິດເດດເຫລືອປະມານ. ຊ້າງເຜືອກຂໍອະໄພຍະໂທດນຳສິນໄຊ ທີ່ໄດ້ສະແດງອາການໂມໂຫໂທໂສຢ່າງບັງອາດ. ຝ່າຍ ສິນໄຊ ກ່າວວ່າ ຕົນບໍ່ໄດ້ຄິດອາຄາດບາດໝາງ ຫລື ຜູກເວນແຕ່ຢ່າງໃດ ມີແຕ່ຄວາມປະສົງຢາກໄປນຳເອົາອາ ຢູ່ເມືອງຍັກເທົ່ານັ້ນ, ທ້າວຖາມວ່າ "ມີຜູ້ໃດຮູ້ເຫັນຮ່ອງຮອຍ ການທີ່ຍັກກຸມພັນ ໄປລັກເອົານາງ ສຸມຸນທາໜີໄປຫລືບໍ່ ? ພະຍາຊ້າງເລົ່າວ່າ ໄດ້ເຫັນຍັກກຸມພັນອູ້ມເອົາ ນາງຜ່ານກາຍໄປ ເມື່ອແປດປີມາແລ້ວ, ຍັກໂຕນີ້ ມີລິດເດດຫລາຍ ແລະກ່ອນຈະຮອດໂຕມັນ ກໍຕ້ອງຜ່ານດ່ານກັນດານ ຊຶ່ງມີຍັກສີ່ໂຕ ຂວາງໜ້າຢູ່, ຜູ້ໃດກໍຕາມທີ່ຕົກເຂົ້າໄປໃນດ່ານນີ້ ຈະບໍ່ລອດຊີວິດໄປໄດ້ເລີຍ, ດັ່ງນີ້ ຕ້ອງລະວັງຕົວທີ່ສຸດ."

ສິນໄຊກ່າວຂອບໃຈໃນຄວາມຫວັງດີ ແລ້ວກໍເດີນທາງຕໍ່ໂດຍມີຂະບວນຊ້າງແຫ່ແຫນໄປສົ່ງຈົນຫວິດດົງຊ້າງ.

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ